ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ສະຖາບັນການທະນາຄານສະຫຼູບຜົນງານ 40 ປີ




ຄະນະພັກ-ຄະນະສະຖາບັນການທະນາຄານ (ສທຄ) ໄດ້ຈັດຕັ້ງພິທີສະຫຼູບຜົນງານ 40 ປີ ຊຶ່ງຈັດຂຶ້ນໃນວັນທີ 3 ມັງກອນ 2019 ທີ່ສະໂມສອນ ສທຄ ໂດຍການໃຫ້ກຽດເຂົ້າຮ່ວມຂອງທ່ານ ສອນໄຊ ສິດພະໄຊ ກຳມະການສຳຮອງສູນກາງພັກ, ເລຂາຄະນະພັກ-ຜູ້ວ່າການທະນາຄານແຫ່ງ ສປປ ລາວ (ທຫລ); ພ້ອມນັ້ນ ກໍ່ມີຄະນະ ສທຄ ແລະ ພາກສ່ວນກ່ຽວຂ້ອງເຂົ້າຮ່ວມ.

ທ່ານນາງ ດວງດີ ພິມວົງສາ ພິມວົງສາ ຄະນະພັກ ທຫລ, ຫົວໜ້າ ສທຄ ໄດ້ລາຍງານການເຄື່ອນໄຫວວຽກງານ ສທຄ ໂດຍກ່າວວ່າ: ກ່ອນໜ້ານີ້ 40 ປີ (1979-2019) ຄືໃນວັນທີ 5 ມັງກອນ 1979 “ໂຮງຮຽນວິຊາສະເພາະທະນາຄານ” ໄດ້ຮັບການສ້າງຕັ້ງຂຶ້ນຢ່າງເປັນທາງການ ແລະ ຮອດປີ 1994 ປ່ຽນຊື່ມາເປັນສູນຝຶກອົບຮົມວິຊາການທະນາຄານ; ປີ 2001 ໄດ້ປ່ຽນຊື່ເປັນວິທະຍາໄລການທະນາຄານ ແລະ ມາຮອດປີ 2005 ມາເຖິງປັດຈຸບັນຈຶ່ງປ່ຽນຊື່ເປັນສະຖາບັນການທະນາຄານຊຶ່ງມີບົດບາດສຳຄັນໃນການກໍ່ສ້າງວິຊາການທະນາຄານ ແລະ ບຳລຸງຍົກລະດັບພະນັກງານໃນຂະແໜງການທະນາຄານ, ການເງິນ-ການບັນຊີ ແລະ ການເງິນຈຸລະພາກ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການໃຫ້ແກ່ຕະຫຼາດແຮງງານໃນແຕ່ລະໄລຍະ.

ສະຖາບັນການທະນາຄານ ໄດ້ເຕີບໃຫ່ຍຂະຫຍາຍຕົວທາງດ້ານປະລິມານ ແລະ ຄຸນນະພາບ ຊຶ່ງໃນໄລຍະເປັນໂຮງຮຽນວິຊາສະເພາະແມ່ນໄດ້ຈັດຝຶກອົບຮົມ, ບຳລຸງໃຫ້ພະນັກງານຊ່ວຍວຽກບໍລິຫານຂຶ້ນໄປຫາພະນັກງານລະດັບສູງແກ່ຂະແໜງການທະນາຄານ 6 ຊຸດມີຜູ້ເຂົ້າຮ່ວມ 150 ເທື່ອຄົນ; ໄລຍະເປັນສູນຝຶກອົບຮົມວິຊາການທະນາຄານຈັດຊຸດຝຶກອົບຮົມ-ສຳມະນາ, ເປີດສອນຊັ້ນຕົ້ນຫຼັກສູດ 6 ເດືອນ ໃຫ້ແກ່ພະນັກງານລະບົບທະນາຄານ 34 ຊຸດມີຜູ້ເຂົ້າຮ່ວມ 1.291 ເທື່ອຄົນ; ນອກນັ້ນ, ກໍ່ໄດ້ຮ່ວມມືກັບອົງການໄຈກາ, ອົງການພັດທະນາອາຊີ (ADB) ຊ່ວຍເຫຼືອລ້າທາງດ້ານການຈັດຝຶກອົບຮົມໃຫ້ພະນັກງານຂັ້ນຄະນະກົມ ແລະ ຄະນະອຳນວຍການທະນາຄານທຸລະກິດ 1 ຊຸດ; ໄລຍະເປັນວິທະຍາໄລການທະນາຄານກໍ່ໄດ້ຈັດຕັ້ງການຮຽນ-ການສອນຫຼັກສູດຊັ້ນກາງ 2 ປີ-ຊັ້ນສູງລະບົບ 3 ປີ ມີ 3 ສາຂາ ຄື: ການທະນາຄານ, ການເງິນ ແລະ ການບັນຊີ ໃນນັ້ນໄດ້ເປີດກວ້າງຮັບນັກສຶກສາສາມັນ ແລະ ພະນັກງານລະບົບ

ທະນາຄານເຂົ້າຮຽນໃນຫຼັກສູດຕ່າງໆ ເຊິ່ງໄດ້ສ້າງບຸກຄະລາກອນໄດ້ 789 ຄົນ; ນັບແຕ່ປີ 2005 ຈົນມາຮອດປັດຈຸບັນ ສທຄ ໄດ້ຈັດຕັ້ງປະຕິບັດການຮຽນ-ການສອນຫຼັກສູດຊັ້ນສູງ 14 ຊຸດ, ປະລິນຍາຕີ 7 ຊຸດ ແລະ ປະລິນຍາຕີຕໍ່ເນື່ອງ 5 ຊຸດ ເຊິ່ງມີຜູ້ສຳເລັດການສຶກສາທັງໝົດ 8.070 ຄົນ.

ທ່ານຜູ້ວ່າການ ທຫລ ໄດ້ຕີລາຄາສູງຕໍ່ຜົນສຳເລັດຂອງ ສທຄ ທີ່ຍາດມາໄດ້ໃນໄລຍະ 40 ປີຜ່ານມາໂດຍສາມາດສ້າງບຸກຄະລາກອນທີ່ມີທັງປະລິມານ ແລະ ຄຸນນະພາບ ອອກຮັບໃຊ້ສັງຄົມເປັນຈຳນວນບໍ່ໜ້ອຍໃນແຕ່ລະປີ ກາຍເປັນກຳລັງແຮງອັນສຳຄັນໃນການພັດທະນາເສດຖະກິດຂອງຊາດ; ແຕ່ເຖິງຢ່າງໃດກໍ່ຕາມ, ໃນຍຸກປັດຈຸບັນມີຫຼາຍອັນທີ່ເປັນສິ່ງທ້າທາຍ ເຊິ່ງຍຸກແຫ່ງການເຊື່ອມໂຍງ, ຍຸກຂອງການພັດທະນາທາງດ້ານເຕັກໂນໂລຊີ ລະບົບການສຶກສາແມ່ນອົງປະກອບພື້ນຖານໜຶ່ງທີ່ສຳຄັນ ຕ້ອງໄດ້ເອົາໃຈໃສ່ໃນການກໍ່ສ້າງ ແລະ ພັດທະນາບຸກຄະລາກອນ ໃຫ້ມີຄຸນນະພາບ ທຽບເທົ່າກັບສາກົນເພື່ອຮັບມືກັບສິ່ງທ້າທາຍດັ່ງກ່າວ.

**# ຂ່າວ-ພາບ: ຣັດສະໝີ ດວງສັດຈະ**

**ເງິນກີບຄືກຽດສັກສີຂອງຊາດ ໃຊ້ຈ່າຍສະຫຼາດ ຊາດພັດທະນາ**